**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 3532 /ກງ

ນະຄອນຫຼວງວຽງຈັນ, ວັນທີ 02 ພະຈິກ 2018

# ແຈ້ງການ

**ຮຽນ:** – ທ່ານ ເຈົ້າຄອງນະຄອນຫຼວງວຽນຈັນ;

– ທ່ານ ເຈົ້າແຂວງຫຼວງພະບາງ;

– ທ່ານ ເຈົ້າແຂວງວຽງຈັນ;

– ທ່ານ ເຈົ້າແຂວງບໍລິຄໍາໄຊ;

– ທ່ານ ເຈົ້າແຂວງສະຫວັນນະເຂດ;

– ທ່ານ ເຈົ້າແຂວງຄໍາມ່ວນ;

– ທ່ານ ເຈົ້າແຂວງຈໍາປະສັກ.

**ເລື່ອງ:** ເປີດນໍາໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາອາກອນ (ລະບົບໃໝ່).

- ອີງຕາມ ດໍາລັດນາຍົກລັດຖະມົນຕີ, ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການເປີດນໍາໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງ ເກັບລາຍ ຮັບສ່ວຍສາອາກອນ “TaxRIS” (ລະບົບໃໝ່) ຂອງກົມສ່ວຍສາອາກອນ, ລາຍລະອຽດດັ່ງລຸ່ມນີ້:

1. ເລີ່ມແຕ່ວັນທີ 15/10/2018 ເປັນຕົ້ນໄປ ແມ່ນ ຈະອອກເລກປະຈໍາຕົວຜູ້ເສຍອາກອນພ້ອມກັບໃບທະບຽນ ວິສາຫະກິດ ໃນເວລາທີ່ວິສາຫະກິດຂໍສ້າງຕັ້ງວິສາຫະກິດໃໝ່ຈາກພາກສ່ວນ ທະບຽນ ແລະ ຄຸ້ມຄອງວິສາ ຫະກິດ ຂອງ ກະຊວງ ອຸດສາຫະກໍາ ແລະ ການຄ້າ ໃນຂອບເຂດທົ່ວປະເທດ, ບ່ອນທີ່ ພາກສ່ວນ ທະບຽນ ແລະຄຸ້ມຄອງວິສາຫະກິດນໍາໃຊ້ລະບົບຄຸ້ມຄອງທະບຽນວິສາຫະກິດ ແລະ ມີການເຊື່ອມຕໍ່ສົ່ງຂໍ້ມູນກັບລະ ບົບ ”TaxRIS”;
2. ພາຍຫຼັງວິສາຫະກິດໄດ້ຮັບໃບທະບຽນວິສາຫະກິດທີ່ມີເລກປະຈໍາຕົວຜູ້ເສຍອາກອນແລ້ວ ແມ່ນ ສາມາດດໍາ ເນີນທຸລະກິດໄດ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ພາຍໃນ 90 ວັນ ນັບແຕ່ມື້ອອກໃບທະບຽນວິສາຫະ ກິດ ແມ່ນ ໃຫ້ວິສາຫະກິດດັ່ງກ່າວເຂົ້າມາພົວພັນນໍາລັດຖະການສ່ວນສ່ວຍສາອາກອນ ເພື່ອປະກອບຂໍ້ມູນ ການແຈ້ງມອບອາກອນ ໃຫ້ຖືກຕ້ອງຄົບຖ້ວນຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ. ຖ້າວິສາຫະກິດໃດ ບໍ່ພົວພັນຫາລັດຖະການສ່ວຍສາອາກອນຕາມກໍານົດດັ່ງກ່າວ, ຖືວ່າວິສາຫະກິດດັ່ງກ່າວບໍ່ເຄື່ອນໄຫວ ແລະ ຈະຖືກປະຕິບັດຕາມ ມາດຕາ 22 ຂອງ ກົດໝາຍວ່າດ້ວຍວິສາຫະກິດ;
3. ສໍາລັບວິສາຫະກິດທີ່ມີໃບທະບຽນວິສາຫະກິດອອກກ່ອນວັນທີ 15/10/2018, ວິສາຫະກິດທີ່ອອກໃບທະ ບຽນວິສາຫະກິດຢູ່ກັບພາກສ່ວນທະບຽນ ແລະ ຄຸ້ມຄອງວິສາຫະກິດ ທີ່ບໍ່ມີການເຊື່ອມຕໍ່ກັບລະບົບ

TaxRIS ບໍ່ສາມາດອອກເລກປະຈຳຕົວຜູ້ເສຍອາກອນພ້ອມກັບໃບທະບຽນວິສາຫະກິດ, ວິສາຫະກິດທີ່ຂໍອານຸຍາດດຳເນີນທຸລະກິດຜ່ານຂະແໜງການອື່ນໆ ນອກຈາກຂະແໜງການຄ້າ ແລະ ຜູ້ເສຍອາກອນທີ່ບໍ່ແມ່ນ ວິສາຫະກິດ ເປັນຕົ້ນ: ບຸກຄົນທົ່ວໄປ, ອົງການຈັດຕັ້ງຕ່າງໆ ແມ່ນ ໃຫ້ຂໍເລກປະຈຳຕົວຜູ້ເສຍອາກອນຢູ່ຫ້ອງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ຫຼື ສາມາດຂໍເລກປະຈຳຕົວຜູ້ເສຍອາກອນດ້ວຍຕົນເອງ ຜ່ານເວັບໄຊທ໌ (http://taxservice.mof.gov.la);

4. ວັນທີ 5/11/2018, ເລີ່ມແຈ້ງມອບອາກອນໃນລະບົບໃໝ່ຕາມຮູບແບບການແຈ້ງອາກອນແບບໃໝ່ ແລະ ຜູ້ເສຍອາກອນສາມາດແຈ້ງມອບອາກອນດ້ວຍຕົນເອງຜ່ານເວັບໄຊທ໌(http://taxservice.mof.gov.la). ຊຶ່ງຈະໄດ້ນຳໃຊ້ຢູ່ ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳ 5 ແຂວງ(ນະຄອນຫຼວງວຽງຈັນ, ຫຼວງພະບາງ, ວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ) ແລະ ສ່ວຍສາອາກອນປະຈຳ 5 ເມືອງ (ຈັນທະບູລີ, ສີໂຄດຕະບອງ, ໄຊເຊດຖາ, ສີສັດຕະນາກ ແລະ ນະຄອນຫຼວງພະບາງ);
5. ເລີ່ມເປີດນຳໃຊ້ລະບົບດັ່ງກ່າວໃນຕົ້ນປີ 2019 ຢູ່ສ່ວຍສາອາກອນປະຈຳແຂວງ(ບໍລິຄຳໄຊ ແລະ ຄຳມ່ວນ) ແລະ ສ່ວຍສາອາກອນປະຈຳເມືອງ(ວັງວຽງ, ປາກຊັນ, ທ່າແຂກ, ນະຄອນໄກສອນພົມວິຫານ ແລະ ນະຄອນປາກເຊ) ແລະ ມີແຜນຂະຫຍາຍການນຳໃຊ້ລະບົບດັ່ງກ່າວໄປບັນດາແຂວງທີ່ຍັງເຫຼືອໃນຂອບເຂດທົ່ວປະເທດໃຫ້ສຳເລັດໃນປີ 2019.

ສະນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊ່ວຍຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດວຽກງານຫັນການຄຸ້ມຄອງລາຍຮັບສ່ວຍສາອາກອນເປັນທັນສະໄໝດັ່ງກ່າວໃຫ້ສຳເລັດຜົນດີ. ພ້ອມທັງຊ່ວຍຊຸກຍູ້ຫົວໜ່ວຍວິສາຫະກິດໃຫ້ນຳໃຊ້ລະບົບດັ່ງກ່າວ ເພື່ອອອກໃບແຈ້ງມອບອາກອນ ແລະ ໄປມອບອາກອນຜ່ານທະນາຄານຢ່າງກວ້າງຂວາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ